## ຄວາມພິການ



ຖ້າທ່ານເປັນຄົນພິການ, ບໍ່ວ່າຈະເບິ່ງເຫັນ ຫຼື ເບິ່ງບໍ່ເຫັນ (ທາງຈິດໃຈ, ຮ່າງກາຍ, ຫຼື ອາລົມ) ຜູ້ໃຫ້ບໍລິການທີ່ຢູ່ອາໄສໃນຕໍ່ໜ້າ ຫຼື ປະຈຸບັນອາດຈະບໍ່ຖາມກ່ຽວກັບລັກສະນະ ຫຼື ຄວາມຮຸນແຮງຂອງຄວາມພິການຂອງທ່ານ. ຫຼື ອາດຈະບໍ່ມີຜູ້ໃດຢູ່ໃນການດຳເນີນການຖາມກ່ຽວກັບຄວາມພິການຂອງສະມາຊິກຄອບຄົວ, ແຂກ, ຄົນທີ່ຄຸ້ນເຄີຍ, ຫຼື ໝູ່ຂອງທ່ານ. ຖ້າຄວາມພິການຂອງຜູ້ເຊົ່າຕ້ອງການໃຫ້ມີຂໍ້ຍົກເວັ້ນຕໍ່ນະໂຍບາຍ/ກົດລະບຽບ ຫຼື ການປ່ຽນແປງຕໍ່ສ່ວນໂຄງສ້າງ ເພື່ອໃຊ້ ແລະ ຢູ່ໃນທີ່ຢູ່ອາໄສ, ຜູ້ເຊົ່າອາດຈະ**ສະເໜີຂໍທີ່ຢູ່ອາໄສທີ່ເໝາະສົມ** (ກົດລະບຽບ/ນະໂຍບາຍ) ຫຼື **ການສະເໜີຂໍດັດແປງທີ່ເໝາະສົມ** (ທາງດ້ານໂຄງສ້າງ) ຈາກຜູ້ໃຫ້ບໍລິການທີ່ຢູ່ອາໄສໄດ້.
ນັ້ນຄື ຢູ່ໃນສະຖານທີ່ບ່ອນຈອດລົດທີ່ຜູ້ມາກ່ອນໄດ້ຈອດກ່ອນນັ້ນ, ຄົນພິການດ້ານການເຄື່ອນໄຫວອາດຈະຂໍບ່ອນຈອດລົດທີ່ສະຫງວນໄວ້ໄດ້. ໂດຍທົ່ວໄປນັ້ນດ້ວຍການອຳນວຍຄວາມສະດວກໃຫ້ແລ້ວ, ແມ່ນຈະມີຄ່າໃຊ້ຈ່າຍພຽງເລັກນ້ອຍກ່ຽວຂ້ອງເຖິງບໍ່ມີເລີຍ. ເຖິງແນວໃດກໍ່ຕາມ ດ້ວຍການດັດແປງ (ການຕິດຕັ້ງຮາວຈັບ, ຂັ້ນໄດຂຶ້ນລົງ, ອື່ນໆ) ຕາມປົກກະຕິຜູ້ເຊົ່າຈະຈ່າຍຄ່າການດັດແປງ ແລະ ສາມາດຂໍໃຫ້ເຮັດມັນສຳເລັດໃນຮູບແບບທີ່ກັບນາຍຊ່າງເຮັດ. ມັນຍັງເປັນໄປໄດ້ທີ່ຜູ້ເຊົ່າອາດຈະຖືກຜູ້ໃຫ້ບໍລິການທີ່ຢູ່ອາໄສຮຽກຮ້ອງໃຫ້ແປງໂຄງສ້າງນັ້ນກັບຄືນສູ່ສະພາບເດີມຂອງມັນ.

## ສະຖານະນັກຮົບເກົ່າ/ທະຫານ

ທະຫານທີ່ຍັງປະຕິບັດໜ້າທີ່ຢູ່ ຫຼື ນັກຮົບເກົ່າທີ່ໄດ້ຮັບກຽດໃຫ້ອອກຈາກໜ້າທີ່ຈະບໍ່ຈຳກັດທາງເລືອກທີ່ຢູ່ອາໄສຂອງທ່ານ. "ຂໍອະໄພ, ຂ້ອຍບໍ່ສາມາດໃຫ້ທ່ານເຊົ່າໄດ້ —ທ່ານສາມາດຖືກຮຽກຕົວໄປເປັນທະຫານ ແລະ ບໍ່ໝົດໄລຍະການເຊົ່າໄດ້" ແມ່ນການເລືອກປະຕິບັດຕໍ່ເລື່ອງທີ່ຢູ່ອາໄສ. ຖ້າທ່ານຖືກຮຽກຕົວໄປເປັນທະຫານ, ທ່ານມີສິດໄດ້ຮັບການປົດປ່ອຍອອກຈາກການເຊົ່າ ໂດຍບໍ່ມີການປັບໃໝເງິນໃດໆ.
ຖ້າທ່ານມີຄວາມພິການກ່ຽວຂ້ອງກັບການຮັບໃຊ້ໜ້າທີ່, ທ່ານອາດຈະຂໍໃຫ້ຜູ້ໃຫ້ບໍລິການຈັດທີ່ຢູ່ອາໄສທີ່ເໝາະສົມ ຫຼື ດັດແປງຕາມຄວາມເໝາະສົມໃຫ້ຕາມທີ່ອະທິບາຍໄວ້ຂ້າງເທິງໄດ້.

## ສະຖານະຄອບຄົວ

ຢູ່ໃນລັດວໍຊິງຕັນ, ຜູ້ໃຫ້ບໍລິການທີ່ຢູ່ອາໄສຖືກຫ້າມໃນເລື່ອງການປະຕິເສດການໃຫ້ເຊົ່າ ຫຼື ສ້າງຂໍ້ກຳນົດ ຫຼື ເງື່ອນໄຂຂອງຜູ້ເຊົ່າແຕກຕ່າງອອກໄປ ເນື່ອງຈາກບຸກຄົນນັ້ນເປັນໂສດ, ແຕ່ງງານແລ້ວ, ເປັນໝ້າຍ, ແຍກທາງກັນ ຫຼື ປະຮ້າງ. "ຂໍອະໄພ, ພວກເຮົາຢາກຈະໃຫ້ທ່ານເຊົ່າຢູ່, ແຕ່ພວກເຮົາຢາກຈະໄດ້ຄູ່ຜົວເມຍທີ່ແຕ່ງງານແລ້ວ, ມີອາຊີບ, ເປັນຄົນດີເຂົ້າມາຢູ່ໃນບ້ານຂອງພວກເຮົາ" ອາດຈະນຳໄປສູ່ການຮ້ອງທຸກເລື່ອງການເລືອກປະຕິບັດຕໍ່ທາງດ້ານທີ່ຢູ່ອາໄສ.

---

ຄວາມສາມາດຂອງຄົນທີ່ຈະເຊົ່າສະຖານທີ່ແມ່ນຄວາມອີງຕາມມາດຖານຂອງການສະໝັກ, ຜ່ານການກວດຜູ້ເຊົ່າ (ລາຍງານດ້ານຄວາມໜ້າເຊື່ອຖື, ປະຫວັດອາຊະຍາກຳ, ກວດປະຫວັດການເຊົ່າ) ແລະ ບັນລຸໄດ້ຄົບຕາມຂໍ້ຜູກມັດທາງດ້ານການເງິນຂອງໜ່ວຍ. ຊັບສົມບັດໃຫ້ເຊົ່າຄວນເຮັດເປັນລາຍການ ແລະ ໂຄສະນາພຽງແຕ່ຕາມຄຸນສົມບັດຂອງມັນ (ຫ້ອງນອນ, ຫ້ອງນ້ຳ, ບ່ອນຈອດລົດ, ດາດຟ້າ, ອື່ນໆ) ບໍ່ແມ່ນຕາມ "ປະເພດ" ຂອງຄົນທີ່ຜູ້ໃຫ້ບໍລິການທີ່ຢູ່ອາໄສມັກ (ຜູ້ໃຫຍ່, ຄູ່ຜົວເມຍ, ພົນລະເມືອງສະຫະລັດ, ແມ່ຍິງເທົ່ານັ້ນ, ອື່ນໆ)

---

ຖ້າທ່ານຄິດວ່າ ທ່ານຖືກເລືອກປະຕິບັດຕໍ່ການດຳເນີນການດ້ານທີ່ຢູ່ອາໄສ, ໃຫ້ຕິດຕໍ່ຫາ:

Northwest Fair Housing Alliance (ພັນທະມິດທີ່ຢູ່ອາໄສຍຸຕິທຳນອດເວັສ)
35 W. Main Ave, Suite 250
Spokane, WA 99201

ໂທ. 509-325-2665
1-800-200-FAIR (3247)
ແຟັກ: 1-866-376-6308
www.nwfairhouse.org

ພວກເຮົາສາມາດແນະນຳທາງເລືອກຂອງທ່ານໃຫ້ທ່ານ ແລະ ໃຫ້ການສະໜັບສະໜູນທ່ານໄດ້. ການບໍລິການຂອງພວກເຮົາແມ່ນມີໃຫ້ຟຣີ.

ວຽກທີ່ໃຫ້ເປັນພື້ນຖານສຳລັບການເຜີຍແຜ່ນີ້ໄດ້ຮັບການສະໜັບສະໜູນບາງສ່ວນໂດຍການໃຫ້ທຶນພາຍໃຕ້ທຶນຊ່ວຍເຫຼືອສຳລັບກະຊວງເຄຫາສະຖານ ແລະ ການພັດທະນາຕົວເມືອງຂອງສະຫະລັດ. NWFHA ມີຄວາມຮັບຜິດຊອບຕໍ່ຄວາມຖືກຕ້ອງຂອງຄຳຖະແຫຼງ ແລະ ການແປຄວາມໝາຍທັງໝົດທີ່ມີຢູ່ໃນການເຜີຍແຜ່ນີ້. 4/16



# ສິດຕໍ່ທີ່ຢູ່ອາໄສທີ່ເປັນທຳ




Northwest Fair Housing Alliance (ພັນທະມິດທີ່ຢູ່ອາໄສຍຸຕິທຳນອດເວັສ)

(509) 325-2665
1 (800) 200-FAIR (3247)
www.nwfairhouse.org

# ທີ່ຢູ່ອາໄສທີ່ເປັນທຳ: ມັນແມ່ນສິດຂອງທ່ານ!

**ລັດຖະບານກາງ**

- ເຊື້ອຊາດ
- ສີຜິວ
- ຊາດກຳເນີດ
- ສາສະໜາ
- ເພດ
- ຄວາມພິການ
- ສະຖານະຄອບຄົວ (ເດັກຢູ່ໃນຄອບຄົວ)

**ລັດວໍຊິງຕັນ**

- ສະຖານະພາບ
- ຄວາມນິຍົມທາງເພດ/ການບອກເພດ
- ສະຖານະນັກຮົບເກົ່າ/ທະຫານ

ໃນຖານະທີ່ເປັນຜູ້ເຊົ່າຢູ່ໃນລັດວໍຊິງຕັນ, ກົດໝາຍທີ່ຢູ່ອາໄສທີ່ເປັນທຳຂອງລັດຖະບານກາງ (FHA) ໃຫ້ທ່ານໄດ້ຮັບການປົກປ້ອງ, ໂອກາດເທົ່າທຽມກັນ, ແລະ ບໍ່ມີການເລືອກປະຕິບັດຕໍ່ທີ່ຢູ່ອາໄສບົນພື້ນຖານ: ເຊື້ອຊາດ, ສີຜິວ, ຊາດກຳເນີດ, ສາສະໜາ, ເພດ, ຄວາມພິການ, ແລະ ສະຖານະພາບ. ຢູ່ໃນລັດວໍຊິງຕັນ, ກົດໝາຍລັດວໍຊິງຕັນຕ້ານການເລືອກປະຕິບັດ (WLAD) ໃຫ້ການປົກປ້ອງດ້ານທີ່ຢູ່ອາໄສເພີ່ມເຕີມແກ່ທ່ານສຳລັບ: ສະຖານະການແຕ່ງງານ, ຄວາມນິຍົມທາງເພດ/ການກຳນົດເພດ, ແລະ ສະຖານະນັກຮົບເກົ່າ/ທະຫານ.

FHA ແລະ WLAD ຄຸ້ມຄອງທຸກພາກສ່ວນຂອງການດຳເນີນການດ້ານທີ່ຢູ່ອາໄສຂອງທ່ານຄື: ການຊອກທີ່ຢູ່ອາໄສຂອງທ່ານ, ການສະໝັກ ແລະ ການກວດ, ສັນຍາເຊົ່າ, ການເອົາປະກັນໄພຂອງຜູ້ເຊົ່າ, ຂໍ້ກຳນົດ ແລະ ເງື່ອນໄຂການເຊົ່າຂອງທ່ານ, ການຕໍ່ການເຊົ່າ, ການສິ້ນສຸດການເຊົ່າ ແລະ ຂະບວນການຍົກຍ້າຍອອກ.

ຖ້າທ່ານຜ່ານມາດຖານການກວດຂອງຜູ້ໃຫ້ບໍລິການທີ່ຢູ່ອາໄສ, ແລະ ສາມາດຈ່າຍຄ່າມັດຈຳ, ຄ່າເຊົ່າ ແລະ ຄ່າທຳນຽມທີ່ກ່ຽວຂ້ອງທີ່ໄດ້ໂຄສະນາໄປແລ້ວ, ທ່ານມີສິດເລືອກທີ່ຢູ່ອາໄສທີ່ເໝາະສົມກັບທ່ານ ແລະ/ຫຼື ຄອບຄົວຂອງທ່ານໄດ້ຕາມໃຈ.



## ເຊື້ອຊາດ, ສີຜິວ, ຊາດກຳເນີດ



ການຖືກປະຕິເສດທີ່ຢູ່ອາໄສ, ຖືກຈຳກັດໃຫ້ແຕ່ພື້ນທີ່ຂອງອາພາດເມັ້ນສະເພາະ ຫຼື ຖືກຊີ້ນຳໃຫ້ໄປຫາບ່ອນໃກ້ຄຽງສຳລັບ "ຄົນທີ່ຄືກັບທ່ານ" ແມ່ນການເລືອກປະຕິບັດເລື່ອງທີ່ຢູ່ອາໄສ. ຖ້າທ່ານໂທໄປຫາບ່ອນໂຄສະນາທີ່ຢູ່ອາໄສ ແລະ ເຫັນວ່າມີທຸກຢ່າງໃຫ້ຕາມທາງໂທລະສັບ, ແຕ່ເມື່ອທ່ານໄປປະກົດຕົວດ້ວຍຕົວເອງຕາມການນັດໝາຍເພື່ອເບິ່ງບ່ອນຕົວຈິງ ແລະ ທັນໃດນັ້ນໄດ້ຮັບການບອກມາວ່າ ບໍ່ມີໃຫ້ແລ້ວ, ທ່ານອາດຈະມີການກ່າວຫາເລື່ອງການເລືອກປະຕິບັດເລື່ອງທີ່ຢູ່ອາໄສ.



## ສາສະໜາ/ຄວາມເຊື່ອ

ການໂຄສະນາທີ່ຢູ່ອາໄສບໍ່ຄວນລວມເຖິງຜູ້ນັບຖື ຫຼື ຄວາມມັກທາງດ້ານສາສະໜາ ຫຼື ບໍ່ມີສາສະໜາໃດໆ. ການໂຄສະນາອ້າງອີງໄປເຖິງໂບດສະເພາະເປັນການດຶງດູດມາທີ່ຢູ່ອາໄສສາມາດມີຜົນໃຫ້ເປັນການກ່າວຫາເລື່ອງທີ່ຢູ່ອາໄສທີ່ເປັນທຳໄດ້ ນອກຈາກວ່າໂບດທຸກບ່ອນຢູ່ໃນບໍລິເວນໃກ້ຄຽງນັ້ນມີລາຍຊື່ໄວ້ຕາມທີ່ສາມາດຮັບຮູ້ມັນໄດ້ວ່າ ຜູ້ໃຫ້ບໍລິການທີ່ຢູ່ອາໄສກຳລັງມັກ, ໃຫ້ການສົ່ງເສີມ ຫຼື ບໍ່ສົ່ງເສີມ "ປະເພດ" ຂອງຄົນຈາກການສະໝັກ.

## ເພດ

ພາຍໃຕ້ກົດໝາຍທີ່ຢູ່ອາໄສທີ່ເປັນທຳ, ຜູ້ໃຫ້ບໍລິການຕໍ່ໜ້າ ຫຼື ປະຈຸບັນຖືກຫ້າມເລື່ອງການລ່ວງລະເມີດທາງເພດກັບຜູ້ເຊົ່າ, ເຮັດການເອົາປຽບທາງເພດ ຫຼື ຂໍເລື່ອງຄວາມມັກທາງເພດຈາກຜູ້ເຊົ່າໃນການແລກປ່ຽນໃຫ້ໄດ້ຮັບທີ່ຢູ່ອາໄສ, ໃຫ້ຄວາມສະດວກທາງດ້ານທີ່ຢູ່ອາໄສ (ການຍົກລະດັບເຄື່ອງໃຊ້, ບ່ອນຈອດລົດ, ອື່ນໆ) ຫຼື ການບໍລິການຜູ້ໃຊ້ເຊັ່ນ: ໃຫ້ການສ້ອມແປງ, ບຳລຸງຮັກສາສິ່ງອຳນວຍຄວາມສະດວກໃຫ້, ຫຼື ຕໍ່ການເຊົ່າໃຫ້ໃໝ່.

## ສະຖານະຄອບຄົວ (ຜູ້ທີ່ທັນພົ້ນກະສຽນຢູ່ໃນເຮືອນ)

ກົດໝາຍທີ່ຢູ່ອາໄສທີ່ເປັນທຳກຳນົດໃຫ້ຜູ້ໃຫ້ບໍລິການທີ່ຢູ່ອາໄສເປັນຜູ້ຜິດກົດໝາຍທີ່ເລືອກປະຕິບັດຕໍ່ຜູ້ເຊົ່າໃນຕໍ່ໜ້າ ຫຼື ປະຈຸບັນ ຜູ້ທີ່ມີເດັກນ້ອຍ, ຄາດວ່າຈະມີເດັກນ້ອຍ, ຫຼື ກຳລັງຮັບລ້ຽງ ຫຼື ຮັບດູແລເດັກນ້ອຍມາເປັນສະມາຊິກຂອງຄອບຄົວເຂົາເຈົ້າ.

ອັນທີສອງ, ການມີກົດລະບຽບຈຳກັດຕໍ່ເດັກນ້ອຍເກີນຂອບເຂດອາດຈະຖືວ່າເປັນເລື່ອງການເລືອກປະຕິບັດ ເນື່ອງຈາກມາດຕະຖານທີ່ຢູ່ອາໄສຕ້ອງໄດ້ນຳໃຊ້ຢ່າງເທົ່າທຽມກັນ ບໍ່ວ່າຜູ້ເຊົ່າຈະເປັນຜູ້ໃຫຍ່ ຫຼື ເດັກນ້ອຍກໍ່ຕາມ. ຕົວຢ່າງ "ບໍ່ໃຫ້ມີເຄື່ອງຫຼິ້ນເດັກນ້ອຍຢູ່ໃນທາງເຊື່ອມຕໍ່" ແມ່ນເລືອກປະຕິບັດ. "ບໍ່ໃຫ້ມີເຄື່ອງໃຊ້ສ່ວນຕົວຢູ່ໃນທາງເຊື່ອມຕໍ່" ແມ່ນບໍ່ເປັນຫຍັງ.



ນອກຈາກນັ້ນ, ຜູ້ໃຫ້ບໍລິການທີ່ຢູ່ອາໄສບໍ່ສາມາດຊີ້ນຳວ່າ ຄອບຄົວທີ່ມີເດັກນ້ອຍແມ່ນໃຫ້ໄປເຊົ່າຢູ່ແຕ່ຫ້ອງຢູ່ຊັ້ນພື້ນເທົ່ານັ້ນ (ເພາະວ່າ "ເດັກນ້ອຍວິ່ນຫຼາຍ") ຫຼື ໄດ້ປະຕິເສດຢູ່ໃນເຂດຊັບສິນດ້ວຍລັກສະນະພິເສດ (ເພາະວ່າ "ມັນເປັນອັນຕະລາຍຫຼາຍສຳລັບເດັກນ້ອຍ") ຕົວຢ່າງ: ຖະໜົນລົດຫຼາຍ, ລະບຽງ, ເຊົ່ານ້ຳ, ຫຼື ເຕົາໄຟ.

ອັນສຸດທ້າຍ, ທີ່ຢູ່ອາໄສທີ່ໃສ່ປ້າຍຕິດສະເພາະສຳລັບ "ຜູ້ອາວຸໂສເທົ່ານັ້ນ" (55+, 62+) ຕ້ອງໄດ້ຕາມຂໍ້ແນະນຳສະເພາະແທ້ໆ ເພື່ອໃຫ້ມີສິດໄດ້ຮັບການຍົກເວັ້ນຈາກກົດໝາຍ. ເຈົ້າຂອງເອກະຊົນຜູ້ທີ່ໂຄສະນາວ່າ "ຜູ້ໃຫຍ່ເທົ່ານັ້ນ" ໂດຍບໍ່ໄດ້ຕາມຂໍ້ກຳນົດຂອງຂໍ້ແນະນຳທັງໝົດແມ່ນລະເມີດກົດໝາຍທີ່ຢູ່ອາໄສທີ່ເປັນທຳ.